San Diego Unified School District
*Fact Sheet*

# ມອງໄປຂ້າງໜ້າຂອງສູນການສຶກສາແຊນດິເອໂກ

ປະຈຸບັນນີ້ ສູນກາງສຶກສາແຊນດິເອໂກ (SDCS) ບໍຣິການຊ່ວຍເຫລືອນັກຮຽນຈຳນວນ **135,000** ຄົນ ຈາກຊັ້ນຕຽມອະນຸບານ ເຖິງ ປີທີ **12.** ກໍ່ຕັ້ງຂຶ້ນເມື່ອ ວັນທີ **1** ກໍຣະກະດາ **1854,** ສູນກາງສຶກສານີ້ເຕີບໂຕຂຶ້ນມາຈາກນ້ອຍໆ, ເປັນໂຮງຮຽນເຊົ່າທີ່ມີນາຍຄຣູນຶ່ງຄົນ ທີ່ກາຍເປັນສູນກາງສຶກສາທີ່ໃຫຍ່ສຸດຂັ້ນທີສອງຂອງຣັຖຄາລີຟໍເນັຍ.

ໜ້າທີ່ສູນກາງສຶກສາແຊນດິເອໂກແມ່ນເພື່ອ:

- ເລັ່ງລັດເອົາຜົນສຳເຣັດດ້ານການຮຽນຂອງພວກນັກຮຽນ
- ໃຫ້ຄວາມປອດພັຍ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຮັກສາສ້ອມແປງໂຮງຮຽນ
- ສຳພັນແໜ້ນແຟ້ນກັບພໍ່ແມ່, ຊຸມຊົນ, ທຸຣະກິດ ແລະ ການຊ່ອຍເຫລືອຂອງການສຶກສາຂັ້ນສູງ
- ເພີ້ມພລັງພະນັກງານມີທັມຈະຣິຍາ
- ຮັກສາການໃຫ້ທຶນແກ່ໂຮງຮຽນຂອງພວກເຮົາໃຫ້ພຽງພໍ.

ທ່ານ **Dr. Carl Cohn** ຖືກມອບໝາຍໃຫ້ເປັນຫົວໜ້າບໍຣິຫານການສຶກສາ ເມື່ອເດືອນຕຸລາ **2005.** ສູນກາງສຶກສາປົກຄອງໂດຍ ສະພາອຳນວຍການຫ້າທ່ານ – ແຕ່ລະທ່ານຖືກເລືອກເຂົ້າເຮັດວຽກມີປີການ ສີ່ປີ:

| | |
|---|---|
| **Katherine Nakamura,** ເຂດ **B** (ປະທານ) | ມີປີການ ເຖິງປີ **2010** |
| **Jonh de Beck,** ເຂດ **C** (ຮອງປະທານ) | ມີປີການ ເຖິງປີ **2010** |
| **Mitz Lee,** ເຂດ **A** | ມີປີການ ເຖິງປີ **2008** |
| **Shelia Jackson,** ເຂດ **E** | ມີປີການ ເຖິງປີ **2008** |
| **Luis Acle,** ເຂດ **D** | ມີປີການ ເຖິງປີ **2008** |

ສູນກາງສຶກສານີ້ ໃຊ້ພື້ນທີ່ ຫລາຍກວ່າ **200** ຕລາງໄມ, ຮວມມີ **221** ຕຶກອາຄານໂຮງຮຽນ ແລະ ໄດ້ແບ່ງເປັນຫ້າເຂດ. ແຕ່ລະເຂດປະກອບເຖິງ **25** ໂຮງຮຽນປະຖົມ ແລະ ຢູ່ໃກ້ໆກັບໂຮງຮຽນພາກກາງ ຊຶ່ງກຳກັບໂດຍຫົວໜ້າບໍຣິຫານການສຶກສາປະຈຳເຂດ. ໂຮງຮຽນມັທຍົມ **29** ແຫ່ງນັ້ນກຳກັບໂດຍຮອງຫົວໜ້າບໍຣິຫານການສຶກສາ.

ໃນປີ **1998,** ປະຊາກອນແຊນດິເອໂກລົງຄະແນນປ່ອນບັດຜ່ານຍັດຕິ ແອມ ແອມ **78%** ເພື່ອສັນຍາໃຊ້ເງິນພາສີລ່ວງໜ້າ **151** ພັນລ້ານດອລລາ ເພື່ອສ້ອມແປງໂຮງຮຽນ **161** ແຫ່ງ ແລະ ປຸກກໍ່ສ້າງໃຫມ່ຂຶ້ນ **12** ແຫ່ງ ແລະ ປຸກກໍ່ສ້າງຄືນໃຫມ່ອີກສາມແຫ່ງ. ໃນປີ **2005,** ສັນຍາໃຊ້ເງິນ ໄດ້ຮັບຮາງວັນຍ້ອງຍໍ Grand Golden Watchdog ຈາກສະມາຄົມເສັຍພາສີກຳແພງເມືອງແຊນດິເອໂກ (SDCTA) – ຊຶ່ງເປັນກຽດສູງສຸດສຳຫລັບໂຄງການກຳແພງເມືອງ ທີ່ຖືກຍ້ອງຍໍໃນການໃຊ້ເງິນພາສີຖືກທີ່ຕ້ອງເໝາະສົມ.

ຂໍກຸນແຈເພື່ອຄວາມສຳເຣັດຂອງສູນກາງສຶກສາແມ່ນການເຮັດວຽກຮ່ວມກັບທຸຣະກິດ, ຜູ້ນຳສັງຄົມ ແລະ ຜູ້ອາສາສມັກ, ພ້ອມທັງມີຄວາມສຳພັນອັນດີກັບໂຮງຮຽນວິທຍາລັຍ ແລະ ມະຫາວິທຍາລັຍໃນທ້ອງຖິ່ນ. ມີບັນດາທຸຣະກິດ ແລະ ອົງການຈັດຕັ້ງຕ່າງໆເຂົ້າເປັນຄູ່ຮ່ວມງານໃນການສຶກສາ **1,400** ແຫ່ງ. ໃນສົກຮຽນປີ **2006 – 07,** ຄູ່ຮ່ວມງານໄດ້ບໍຣິຈາກ **5.6** ລ້ານດອລລາ ດ້ານແຮງງານ, ດ້ານເງິນແລະເຄື່ອງຂອງ ແລະ ການບໍຣິການຊ່ວຍເຫລືອຕ່າງໆ. ສູນກາງສຶກສາຍັງຮັບຜົນປະໂຍດຈາກການບໍຣິຈາກເວລາຊ່ວຍເຫລືອຂອງນັກອາສາສມັກຫລາຍກວ່າ **26,000** ຄົນ. ໃນສົກປີ **2006 – 07,** ນັກອາສາສມັກໄດ້ບໍຣິຈາກເວລາຫລາຍກວ່າ **990,000** ຊົ່ວໂມງ, ສເລັ່ຍເປັນເງິນຫລາຍກວ່າ **18** ລ້ານດອລລາ (ອີງໃສ່ສເລັ່ຍຄ່າຈ້າງຊົ່ວໂມງ ພວກທີ່ບໍ່ແມ່ນພະນັກງານກະເສດຕະກອນ, ໃນຊົ່ວໂມງ **$18.77** ຂອງອົງການເອກະຊົນ, ຣັຖວິຊິງຕັນດີຊີ).

## ຂໍ້ສລູບ

- ❖ **ມີນັກຮຽນ 135,053 ຄົນ (ຕຽມອະນຸບານ – 12)**
- ❖ **ເປັນສູນກາງໃຫຍ່ທີສອງໃນຣັຖຄາລີຟໍເນັຍ**
- ❖ **ເປັນສູນກາງໃຫຍ່ທີແປດໃນອະເມຣິກາ**
- ❖ **ພະນັກງານມີໃບຢັ້ງຢືນ 9,274**
- ❖ **ມີພະນັກງານພິເສດ 8,115 ຄົນ**
- ❖ **ພະນັກງານທຽບເທົ້າເຮັດວຽກເຕັມເວລາທັງໝົດ 15,112 ຄົນ**
- ❖ **ພະນັກງານທັງໝົດ (ຮວມທັງພະນັກງານວ່າຈ້າງເປັນຊົ່ວໂມງ ແລະ ຄຣູເຂົ້າມາຢັ້ງມຍາມ 24,004 ຄົນ**
- ❖ **ຕຶກອາຄານໂຮງຮຽນທັງໝົດ 221 ແຫ່ງ**
  - **118 ໂຮງຮຽນປະຖົມ**
  - **24 ໂຮງຮຽນພາກກາງ**
  - **29 ໂຮງຮຽນມັທຍົມ**
  - **15 ໂຮງຮຽນແບບພິເສດ**
  - **35 ໂຮງຮຽນຊາດຕີ (charter)**
- ❖ **ເຜົ່າຊົນຕ່າງໆ (ຂອງນັກຮຽນ):**
  - **44.4% ສະແປນນິສ**
  - **25.3% ຄົນຂາວ**
  - **13.5% ອະຟຣິກກັນ – ອະເມຣິກັນ**
  - **6.6% ຟີລິປິນ**
  - **5.2% ອິນດູຈີນ**
  - **3.5% ເອເຊັຍ**
  - **.55% ອະເມຣິກັນເຜົ່າເດີມ**
- ❖ **ສັງຄົມ – ເສຖກິດປະສົມກັນ:**
  - **29.5% ນັກຮຽນຜູ້ຮຽນພາສາອັງກິດ**
  - **56.9% ຮັບເງື່ອນໄຂກິນອາຫານຟຣີ ຫລື ຊື້ຫລຸດຣາຄາ**
- ❖ **ນັກຮຽນຮັບການສຶກສາພິເສດ 16,418 ຄົນ**
- ❖ **ນັກຮຽນຈາກຄອບຄົວທະຫານ ມີປະມານ 11,000 ຄົນ**
- ❖ **ນັກຮຽນທີ່ເຂົ້າຮ່ວມໃນໂຄງການສຶກສາຜູ້ຮຽນເກັ່ງ ແລະ ມີພອນສວັນພິເສດ 22,500 ຄົນ**
- ❖ **ງົບປະມານປະຈຳປີ 2.2 ພັນລ້ານດອລລາ.**

ລາຍລະອຽດຕິດຕໍ່ຫາ: **Communications: (619) 725-5578**

**www.sandi.net**
*Revised 12/05/07*